# ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຢູ່ ສປປ ລາວ

# Economic Disputes Resolution in Lao PDR

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 8

## ຄວາມຮູ້ກ່ຽວກັບທັກສະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດດ້ວຍການກຳມະການຕັດສິນ

## Knowledge on economic dispute by arbitration resolution skills

ທັກສະຂອງການຕັດສິນ ແມ່ນເຕັກນິກ, ວິທີການ ແລະ ຄວາມຮັບຜິດຊອບທີ່ໂດດເດັ່ນ ຂອງຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ຕໍ່ກັບຂໍ້ຂັດແຍ່ງທີຕົນເອງຮັບຜິດຊອບ ບົນພື້ນຖານກົດໝາຍອານຸຍາດ. ທັກສະການຕັດສິນທີດີ ເປັນວິທີທາງອອກທີ່ດີ ໃນການກະຕຸ້ນໃຫ້ຄູ່ກໍລະນີ ສະໜອງຂໍ້ມູນ, ຫຼັກຖານຕ່າງໆ ທີ່ພົວພັນກັບກໍລະນີຂັດແຍ່ງ ພ້ອມທັງສະແດງຄວາມທັດສະນະ ທີ່ເປັນຈຸດຢືນຂອງຕົນເອງໃຫ້ແກ່ການພິຈາລະນາຕັດສິນຂໍ້ຂັດແຍ່ງ. ດັ່ງນັ້ນ, ໃນບົດນີ້ ແມ່ນຈະໄດ້ຄົ້ນຄ້ວາລົງເລິກ ສາມບັນຫາໃຫຍ່ເຊັ່ນ: ສ້າງຄວາມຮັບຮູ້ເຂົ້າໃຈຕໍ່ທັກສະການຕັດສິນ , ຫຼັກການຂອງການຕັດສິນ ແລະ ເງື່ອນໄຂທີພາໃຫ້ມີການຕັດສິນ.

## 1. ຄວາມໝາຍ, ຄວາມສຳຄັນ ແລະ ຈຸດປະສົງ

### 1.1 ຄວາມໝາຍ

ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດດ້ວຍການຕັດສິນ ແມ່ນຮູບການໜຶ່ງຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ນິຍົມໃຊ້ຢູ່ບັນດາປະເທດຕ່າງໆ ໃນໂລກ ລວມທັງອົງກອນທີ່ເຮັດໜ້າທີ່ໃນການສົ່ງເສີມການພັດທະນາເສດຖະກິດຂອງສາກົນ, ຖືກຮັບຮູ້ ແລະ ຮັບຮອງໂດຍອົງລະບຽບການສາກົນທີ່ກ່ຽວຂ້ອງ ເຊັ່ນ: ສົນທິສົນທິສັນຍາສາກົນວ່າດ້ວຍການຮັບຮູ້ຄຳຕັດສິນຂອງຄະນະກຳມະການຕ່າງປະເທດ ທີ່ເອີ້ນວ່າ ສົນທິສັນຍາ1958. ສຳລັບ ສປປ ລາວ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ດ້ວຍຮູບການຕັດສິນ ຖືກກຳນົດໄວ້ເປັນໜຶ່ງໃນສອງຮູບການແກ້ໄຂ ທີ່ທີ່ກົດໝາຍຮັບຮູ້ ແລະ ຖືກຮັບຮອງໂດຍລັດ. ການຕັດສິນຈະມີຂຶ້ນໄດ້ ກໍຕໍ່ເມື່ອ ໃນກໍລະນີ ມີຂໍ້ຂັດແຍ່ງເກີດຂຶ້ນ ແລ້ວ ຄູ່ກໍລະນີສະໝັກໃຈນຳເອົາຂໍ້ຂັດແຍ່ງຂອງຕົນສະເໜີໄປຍັງ ອົງກອນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ[1] ແລະ ຄູ່ກໍລະນີມີຄວາມສະໝັກໃຈ ເລືອກເອົາຮູບການຕັດສິນນີ້ເປັນທາງເລືອກໃນການແກ້ໄຂ[2].

ທັກສະການຕັດສິນ ໝາຍເຖິງຄວາມຮອບຮູ້ ທີ່ມີສິນລະປະ ຂອງຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ໃນການ ຄົ້ນຄວ້າ ,ການສອບຖາມບັນຫາ ,ການຊີ້ແຈ້ງບັນຫາ ,ການກວດກາ ,ການພິສູດຂໍ້ມູນຫຼັກຖານຕ່າງ

---

[1] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບປີ 2018 ມາດຕາ 9

[2] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບປີ 2018 ມາດຕາ 24.

ກ່ຽວຂ້ອງແລະ ພາກສ່ວນທີ່ກ່ຽວ ຂ້ອງ (ຖ້າມີ) ໃຫ້ດຳເນີນ ຢ່າງຖືກຕ້ອງຕາມຄວາມເປັນຈິງຂອງຂໍ້ຂັດແຍ່ງ, ເອກະສານຄົບຖ້ວນ ແລະ ມີເນື້ອໃນຮັດກຸມ , ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ , ເປັນຫຼັກຖານທີ່ສາມາດນຳມາໃຊ້ ເປັນພື້ນຖານໃຫ້ແກ່ການພິຈາລະນາຕັດສິນດຳເນີນບົນພື້ນຖານຂອບເຂດຄຳສະເໜີ ຂອງຄູ່ຂັດແຍ່ງ[3] ໄດ້ຢ່າງວ່ອງໄວ, ບໍ່ຂັດກັບກົດໝາຍ ແລະ ພາຍຫຼັງຕັດສິນໄປແລ້ວ ຄູ່ກໍລະນີສາມາດຈັດຕັ້ງປະຕິບັດຄຳຕັດສິນນັ້ນ ໄດ້ຢ່າງງ່າຍດາຍ.

**1.2 ຄວາມສຳຄັນ**

ທັກສະຂອງຜູ້ຕັດສັດສິນ ຫຼື ຄະນະກຳມະການຕັດສິນ ແມ່ນສ່ວນປະກອບທີ່ມີຄວາມສຳຄັນທີ່ສຸດ ຕໍ່ການດຳເນີນການແກ້ໄຂບັນຫາສັງຄົມເວົ້າລວມ ການແກ້ໄຂຂໍ້ຂັດແຍ່ງຂັດແຍ່ງທາງດ້ານເສດຖະກິດເວົ້າສະເພາະ. ຍ້ອນວ່າ ທັກສະຂອງການຕັດສິນ ໝາຍເຖິງບຸກຄະລິກ, ທັດສະນະການປະພຶດ, ເຕັກນິກການປາກເວົ້າ, ການວາງຕົວທີ່ເໝາະສົມ ຂອງຜູ້ມີສິດອຳນາດໃນການນຳພາວຽກງານໃດໜຶ່ງໃຫ້ສຳເລັດ.

ໂດຍທົ່ວໄປແລ້ວ ໃນເມື່ອມີຂໍ້ຂັດແຍ່ງກັນເກີດຂຶ້ນແລ້ວ ແຕ່ລະຝ່າຍ ຕ່າງກໍມີວິທີການ ປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນເອງ ທີ່ດີທີສຸດ ຊຶ່ງຖ້າບໍ່ມີການວາງແຜນການຄົ້ນຄ້ວາ, ສຶກສາວິເຄາະ ຂໍ້ມູນຫຼັກຖານ ທີຮັດກຸມແລ້ວ ບໍ່ສາມາດຊອກເຫັນໄດ້ຄວາມຜິດ ຂອງຝ່າຍທີ່ບໍ່ປະຕິບັດຕາມສັນຍາ ນັ້ນ. ໃນເມື່ອຊອກຂໍ້ມູນຫຼັກຖານບໍ່ຊັດເຈນ, ບໍ່ແທດຕົວຈິງ ແມ່ນບໍ່ສາມາດດຳເນີນການຕັດສິນທີ່ຖືກຕ້ອງ ແລະ ເປັນທຳ ແລ້ວນຳໄປສູ່ການບໍ່ສາມາດປົກປ້ອງ ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຄູ່ກໍລະນີໄດ້.

ດັ່ງນັ້ນ, ທັກສະ ການຕັດສິນຂໍ້ຂັດແຍ່ງທາງດ້ານເສດຖະກິດ ນອກຈາກຈະເປັນວິທີການທີ່ສຳຄັນຕໍ່ການປົກປ້ອງສິດ ແລະ ແລະ ຜົນປະໂຫຍດ ຂອງຄູ່ກໍລະນີ ກໍຄືຂອງສັງຄົມ ແລ້ວ ທັກສະການຕັດສິນທີ່ດີຍັງປະກອບສ່ວນເຂົ້າໃນການສ້າງຄວາມເຊື່ອຖືໃຫ້ຄູ່ກໍລະນີ, ກຸ່ມຄົນ ແລະ ສັງຄົມ ໃຫ້ມີຄວາມເຊື່ອຖື ແລະ ເຫຼື້ອມໃສ່ຕໍ່ຄວາມສັກສິດຂອງກົດໝາຍ, ຄວາມແນ່ນອນໃນການດຳເນີນການແກ້ໄຂບັນຫາຂອງອົງກອນ ແລະ ຄຸນວຸດທິ ກໍຄືຄຸນສົມບັດ ແລະ ປະສົບການຂອງຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ. ທັງໝົດນັ້ນ ໄດ້ປະກອບສ່ວນເຂົ້າໃນຫຼາຍດ້ານ ຂອງສັງຄົມໄປພ້ອມໆກັນ ເຊັ່ນ:

1) ປະກອບສ່ວນເຂົ້າໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອຫຼຸດຜ່ອນການຮ້ອງຟ້ອງໄປຍັງສານ ປະຊາຊົນ;

2) ສ້າງສະຕິເຄົາລົບກົດໝາຍ ໃນວົງການທຸລະກິດ ພ້ອມກັນມີສະຕິຕໍ່ການຈັດຕັ້ງປະຕິບັດສັນຍາ ປະຕິບັດກົດໝາຍຢ່າງຖືກຕ້ອງ ເພື່ອປະກອບເຂົ້າໃນການສ້າງລັດທີ່ປົກຄອງດ້ວຍກົດໝາຍ ຢູ່ ສປປ ລາວເທື່ອລະກ້າວ;

3) ຮັບປະກັນແກ້ໄຂຂໍຂັດແຍ່ງໃຫ້ບຸກຄົນ ,ນິຕິບຸກຄົນ ແລະ ອົງການຈັດຕັ້ງ ກໍຄືພົນລະເມືອງທຸກຄົນຢ່າງຖືກຕ້ອງ ,ວ່ອງໄວ້ ,ຮັກສາຄວາມລັບ ,ປະຢັດຄ່າໃຊ້ຈ່າຍ ,ມີລັກສະນະວິຊາການ ແລະ ບໍ່ກະທົບກະ ເທືອນ

[3] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ສະບັບປັບປຸງ ປີ 2010, ມາດຕາ 43 ວັກ 1.

ເຖິງຊື່ສຽງກຽດສັກສີຂອງຄູ່ກໍລະນີ, ຍັງສາມາດປົກປ້ອງສິດຜົນປະໂຫຍດອັນຊອບທຳ ແລະ ສິດເສລີພາບ ຂອງຄູ່ກໍລະນີທີ່ເຂົ້າຮ່ວມໃນການດຳເນີນການຕັດສິນ;

4) ເປັນການປະກອບສ່ວນຊຸກຍູ້ການດຳເນີນການຜະລິດ-ທຸລະກິດ ໃຫ້ຂະຫຍາຍຕົວ ສາມາດມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ທັງເປັນການສ້າງສະພາບແວດລ້ອມເອື້ອອຳນວຍ ໃຫ້ແກ່ນັກລົງທຶນທັງພາຍໃນ, ຕ່າງປະເທດ ແລະ ເປັນການປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

### 1.3 ຈຸດປະສົງ

ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ດ້ວຍການຕັດສິນ ແມ່ນຮູບການໜຶ່ງ ທີ່ນຳໃຊ້ເຂົ້າໃນການແກ້ໄຂຂໍ້ຂັດແຍ່ງ ຂອງວົງການທຸລະກິດ ເພື່ອແກ້ໄຂ ຂໍ້ຂັດແຍ່ງ ທີ່ເກີດຂຶ້ນຈາກການລະເມີດສັນຍາການດຳເນີນການຜະລິດ-ທຸລະກິດລະຫວ່າງຄູ່ກໍລະນີ, ແນໃສ່ແກ້ໄຂຈຸດທີ່ຂັດແຍ່ງກັນ ໃຫ້ຢຸດຕິລົງຄວາມສັນຕິວິທີ ,ເປັນທຳ ແລະ ວ່ອງໄວ.

## 2. ຫຼັກການພື້ນຖານຂອງການຕັດສິນ

### 2.1 ຫຼັກການຄວາມສະໝັກໃຈຂອງຄູ່ກໍລະນີ

ການຕັດສິນ ແມ່ນຮູບການໜຶ່ງ, ເປັນວິທີການໜຶ່ງທີ່ຕ້ອງດຳເນີນບົນຫຼັກການ ຂອງການແກ້ໄຂຂໍ້ຂັດແຍ່ງທີ່ກຳນົດໄວ້ໃນກົດໝາຍ. ສະນັ້ນ, ການຕັດສິນຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈຶ່ງຕ້ອງຢຶດໝັ້ນຫຼັກການຄວາມສະໝັກໃຈຂອງຄູ່ກໍລະນີເປັນຫຼັກ [4].

ກົດໝາຍໄດ້ກຳນົດວິທີການປົກປ້ອງສິດທິຂອງພົນເມືອງ, ໃຫ້ສິດເສລີພາບຖືກກົດໝາຍໃຫ້ແກ່ທຸກຄົນ, ທຸກການ ຈັດຕັ້ງ ສາມາດນຳໃຊ້ວິທີການ ແລະ ມາດຕະການຕ່າງໆ ທີກົດໝາຍບໍ່ເກືອດຫ້າມ ມາເປັນທາງເລືອກໃນການນຳໃຊ້ ແກ້ໄຂບັນຫາ ໂດຍບໍມີການບັງຄັບ, ນາບຂູ່ ແຕ່ຢ່າງໃດເຊັ່ນ: ພົນລະເມືອງລາວ ມີສິດສະເໜີ ແລະ ຮ້ອງຂໍຄວາມເປັນທຳຕໍ່ອົງການທີ່ກ່ຽວຂ້ອງກ່ຽວກັບບັນຫາທີ່ພົວພັນເຖິງສິດ ແລະ ຜົນປະໂຫຍດລວມ ຫຼື ສິດ ແລະ ຜົນປະໂຫຍດສະເພາະ ຂອງຕົນ. ຊຶ່ງຄຳສະເໜີ ແລະ ຄຳຮ້ອງຂໍຄວາມເປັນທຳ ຂອງພົນລະເມືອງ ຕ້ອງໄດ້ຮັບການພິຈາລະນາ ແລະ ແກ້ໄຂຕາມທີ່ກົດໝາຍກຳນົດໄວ້ [5].

ໃນການເຄື່ອນໄຫວພົວພັນສັງຄົມ ເພື່ອການພັດທະນາ ໃນກໍລະນີຫາກມີຂໍ້ຂັດແຍ່ງເກີດຂຶ້ນມາ ຊຶ່ງເນື່ອງມາຈາກການຈິງໃຈບໍ່ປະຕິບັດຕາມສັນຍາທີ່ໄດ້ເຊັນກັນ ຫຼື ຝ່າຍໃດໜຶ່ງຂາດຄວາມຊຳນິຊຳນານ, ຂາດປະສົບການໃນການຈັດຕັ້ງປະຕິບັດຊຶ່ງພາໃຫ້ມີຄວາມເສັຍຫາຍເກີດຂຶ້ນ ຊຶ່ງຂໍ້ຂັດແຍ່ງນັ້ນ ຄູ່ກໍລະນີ ໄດ້ຕົກລົງກັນໄວ້ໃນສັນຍາ ຫຼື ຂໍ້ຂັດແຍ່ງນັ້ນ ສານປະຊາຊົນບໍທັນນຳມາພິຈາລະນາ ຫຼື ພວມດຳເນີນຢູ ຫຼື ມີຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ຫຼື ຂັດແຍ່ງນັ້ນ ບໍ່ພົວພັນກັບຄວາມໝັ້ນຄົງ ຂອງຊາດ, ຄວາມສະຫງົບ ແລະ ສິ່ງແວດ ລ້ອມ[6] ຄູ່ກໍລະນີລ້ວນແລ້ວແຕ່ມີສິດນຳເອົາຂໍ້ຂັແຍ່ງນັ້ນ ໄປຍັງ ອົງກອນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ດຳເນີນການແກ້ໄຂ[7]

---

[4] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບປີ 2018 ມາດຕາ 9.

[5] ລັດຖະທຳມະນູນ ສະບັບ 2015 ມາດຕາ 41 (ປັບປຸງ)

[6] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບປີ 2018 ມາດຕາ 16.

[7] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບປີ 2018 ມາດຕາ 9.

**2.2 ຫຼັກການວິຊາສະເພາະ**

ຫຼັກການວິຊາສະເພາະ ແມ່ນໜຶ່ງໃນຫຼັກການທີ່ຂາດບໍ່ໄດ້ຂອງທຸກຂະແໜງການ ໃນສາຂາຕ່າງໆ ຂອງສັງຄົມ ເປັນຫຼັກການແຫ່ງອຳນາດຕັດສິນຄວາມຍືນຍົງ ຂອງຂະແໜງການ. ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຫຼັກການນີ້ ເປັນຫຼັກການທີ່ລະອຽດອ່ອນທີ່ສຸດ ທີ່ຊອດເຂົ້າໄປໃນບັນຫາຕ່າງໆຢ່າງພາວະວິໄສ. ດັ່ງນັ້ນ , ກົດໝາຍຈຶ່ງຮັບຮູ້ວ່າ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຜູ້ຕັດສິນ ຈຶ່ງບໍ່ສະເພາະແຕ່ແມ່ນທີ່ມີຄວາມຮູ້ທາງດ້ານກົດໝາຍ ຫຼື ເອີ້ນວ່າ ນັກກົດໝາຍທໍ່ນັ້ນ, ແຕ່ກຳມະການຕັດສິນ ຫຼື ຜູ້ຕັດສິນ ຈຶ່ງແມ່ນບຸກຄົນທົ່ວໄປທີ່ມີຄວາມຮູ້ທາງດ້ານວິຊາສະເພາະໃດໜຶ່ງທີ່ແນ່ນອນ. ດັ່ງນັ້ນ, ລັດສົ່ງເສີມໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາກລັດ ແລະ ເອກະຊົນ ພາຍໃນ ຫຼື ຕ່າງປະເທດເຂົ້າຮ່ວມ ພັດທະນາວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ລວມທັງສ້າງຕັ້ງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ແລະ ສະເພາະກິດ[8].

ດ້ວຍເຫດ ແລະ ຜົນ ທີ່ກ່າວມານັ້ນ, ໄດ້ຊີ້ແຈ້ງໃຫ້ພວກເຮົາເຫັນວ່າ ຜູ້ຕັດສິນ ຫຼື ກຳມະການຕັດສິນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນບຸກຄົນທົ່ວໄປ ຊຶ່ງມີທັງພະນັກງານພາກລັດ ແລະ ບຸກຄົນຈາກພາຍນອກ[9]. ຊຶ່ງບຸກຄົນເຫຼົ່ານັ້ນ ຕ້ອງເປັນຜູ້ທີ່ມີຄຸນສົມບັດ, ມີຈັນຍະທຳ ແລະ ບໍລິສຸດ, ມີຄວາມຮູ້ຄວາມສາ ມາດທາງດ້ານວິຊາສະເພາະແຕ່ຊັ້ນສູງຂຶ້ນໄປ[10], ມີຄວາມຮູ້ທາງດ້ານກົດໝາຍ ແລະ ມີປະສົບການຢ່າງໜ້ອຍສິບປີຂຶ້ນໄປ, ໄດ້ຜ່ານ ຫຼື ມີປະສົບການໃນວຽກງານຢ່າງໜ້ອຍ 5 ປີ, ບໍ່ເຄີຍຖືກສານຕັດສິນລົງໂທດຕັດອິດສະລະພາບຍ້ອນການກະທຳຜິດໂດຍເຈດຕະນາ, ໄດ້ຜ່ານການຝຶກອົບຮົມກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ. ແຕ່ສຳຄັນທີ່ສຸດ ຂອງບຸກຄົນທີ່ຈະມີສິດເຄື່ອນໄຫວເປັນຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ຕ້ອງໄດ້ຜ່ານການອະນຸມັດ ແລະ ຮັບຮອງຈາກລັດຖະມົນຕີກະຊວງຍຸຕິທຳ.

ໃນກໍລະນີ ຜູ້ຕັດສິນ ເປັນຄົນຕ່າງປະເທດ ຫຼື ຄົນຕ່າງດ້າວ ນອກຈາກຄົບເງື່ອນໄຂທົ່ວໄປທີ່ໄດ້ກ່າວມາຂ້າງເທິງນີ້ ແລ້ວ ຍັງຕ້ອງມີເງື່ອນໄຂເພີ່ມເຕີມອີກ ເຊັ່ນ: ເຄົາລົບລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການຂອງ ສປປ ລາວ, ໄດ້ຮັບອະນຸມັດໃຫ້ເຂົ້າມາເຮັດວຽກຢ່າງຖືກຕ້ອງ ຫຼື ມີທີ່ຢູ່ຖາວອນຢູ່ ສປປ ລາວ , ຮູ້ພາສາລາວດີ, ຮູ້ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງລາວ[11].

**2.3 ຫຼັກການກຳມະການຕັດສິນຈຳນວນຄີກ**

ໂດຍອີງໃສ່ກະແສແນວຄິດຂອງສັງຄົມ ທີ່ຖືບັນຫາປະຊາທິປະໄຕເປັນກົກ, ຖືສຽງສ່ວນຫຼາຍເປັນບ່ອນອີງ ແລະ ທິດສະດີຂອງການແກ້ໄຂຂໍ້ຂັດແຍ່ງ ແບບຫຼາຍທາງເລືອກ( Alternative Dispute Resolution) ແລ້ວ ການແກ້ໄຂຂໍຂັດແຍ່ງ ທາງການຄ້າ ແມ່ນນິຍົມກັນໃຊ້ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນເປັນຈຳນວນຄີກສະເໝີ . ເຫດຜົນຂອງມັນກໍຍ້ອນເພື່ອຫຼີກລ້ຽງ ໃນກໍລະນີຄະນະກຳມະການຕັດສິນຫາກມີສຽງທໍ່ກັນຈະຖືເອົາສຽງຂອງປະທານເປັນສຽງຕັດສິນ.

---

[8] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບປີ 2018 ມາດຕາ 4 ວັກ 3.

[9] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບປີ 2018ມາດຕາ 63 .

[10] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບປີ 2018 ມາດຕາ 63 ວັກສຸດທ້າຍ

[11] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບປີ 2018 ມາດຕາ 64 ກສກ

ຕາມລະບຽບການສາກົນແລ້ວ ຖ້າວ່າ ຄູ່ສັນຍາບໍ່ໄດ້ຕົກລົງລ່ວງໜ້າກ່ຽວກັບຈຳນວນກຳມະການຕັດສິນຂໍ້ຂັດແຍ່ງໄວ້ລ່ວງໜ້າ ແລະ ຖ້າວ່າພາຍໃນໄລຍະ 30 ວັນ ຫຼັງຈາກໄດ້ຮັບການຕອບແຈ້ງກ່ຽວກັບການຕັດສິນຂໍ້ຂັດແຍ່ງດ້ວຍຄະນະກຳມະການ ແລະ ຄູ່ສັນຍາບໍ່ສາມາດຕົກລົງກັນໄດ້ ຈະໄດ້ແຕ່ງຕັ້ງຄະນະກຳມະການຕັດສິນຂໍ້ຂັດແຍ່ງ 1 ຄົນ ຫຼື 3 ຄົນ[12].

ກົດໝາຍວ່າດ້ວຍຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງ ສປປ ລາວ ສະບັບ 2018 ໄດ້ກຳນົດຈຳນວນກຳມະການຕັດສິນ ຄື ຜູ້ຕັດສິນ ໜຶ່ງຄົນ( 1 ຄົນ) ຫຼື ໃນກໍລະນີ ຂໍ້ຂັດແຍ່ງມີຄວາມຫຍຸ້ງຍາກ , ມີຄວາມສັບສົນ ຫຼື ມູນຄ່າສູງ ຄູ່ກໍລະນີສາມາດເລືອກຄະນະກຳມະການຕັດສິນ 3 ຄົນ[13]. ໂດຍຄູ່ກໍລະນີແຕ່ລະຝ່າຍຕ້ອງຄັດເລືອກກຳມະການຕັດສິນຝ່າຍ ລະ ໜຶ່ງທ່ານ ແລ້ວກຳມະການທີເລືອກໄດ້ມານັ້ນ ຕ້ອງເລືອກເອົາ ໜຶ່ງທ່ານ ມາເປັນປະທານ ຫຼື ໃນກໍລະນີຄູ່ກໍລະນີບໍ່ສາມາດເລືອກໄດ້ ແມ່ນສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງເປັນຜູ້ເລືອກໃຫ້[14].

## 2.4 **ຫຼັກການຖອນຕົວ ແລະ ຄ້ານຕົວ**

ຫຼັກການຖອນຕົວ ຂອງຜູ້ຕັດສິນ ນອກຈາກເປັນການສະແດງຄວາມຈິງໃຈ ທີ່ຂາວສະອາດຂອງຜູ້ຕັດສິນທີ່ມີສາຍກ່ຽວພັນທາງດ້ານສິດຜົນປະໂຫຍດຂອງຂໍ່ຂັດແຍ່ງ ຫຼື ສາຍກ່ຽວພັນທາງດ້ານຍາດຕິພີ່ນ້ອງຂອງ ຝ່າຍໃດຝ່າຍໜຶ່ງ ແລ້ວ ຍັງເປັນການບົ່ງບອກເຖິງຈັນຍະບັນ ແລະ ຈັນຍະທຳຂອງຕົນເອງໃນຖານະຜູ້ຕັດສິນທີ່ຄົບເງື່ອນໄຂຂອງກາາເປັນຜູ້ຕັດສິນ. ເປັນການປະກອບສ່ວນໃນການສ້າງຄວາມເຊື່ອໝັ້ນ ໃຫ້ແກ່ສັງຄົມຕໍ່ກັບອົງກອນ ແລະ ຜູ້ຕັດສິນ, ເປັນແບບຢ່າງທີດີປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດກົດໝາຍໃນສັງຄົມ ໃຫ້ມີຄວາມສັກສິດ ແລະ ໜ້າເຊື່ອຍິ່ງຂື້ນ.

ການຄ້ານຕົວ ແມ່ນໝາຍເຖິງຝ່າຍໃດຝ່າຍໜຶ່ງຂອງຄູ່ກໍລະນີ ມີຫຼັກຖານທີ່ໜ້າເຊື່ອຖືວ່າ ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນບາງທ່ານ ຫຼື ທັງໝົດ ຫາກມີສ່ວນກ່ຽວຂ້ອງ ຫຼື ມີຜົນປະໂຫຍດຕິດພັນ ຊຶ່ງເປັນທີ່ໜ້າເຊື່ອວ່າ ຜູ້ຕັດສິນ ຫຼື ກຳມະການຕັດສິນ ອາດມີການເຂົ້າຂ້າງອອກຂາ ໃນການດຳເນີນແກ້ໄຂຂໍ້ຂັດແຍ່ງນັ້ນ.

ສະນັ້ນ, ເພື່ອເປັນຫຼັກລ້ຽງການຄ້ານຕົວ ໃນກໍລະນີບຸກຄົນໃດໜຶ່ງຖືກຕິດຕໍ່ວຽກງານຊຶ່ງພົວພັນກັບຄວາມເປັນເປັນໄປໄດ້ ໃນການແຕ່ງຕັ້ງໃຫ້ຜູ້ກ່ຽວເປັນຜູ້ຕັດສິນ ຫຼື ກຳມະການຕັດສິນ ຂໍ້ຂັດແຍ່ງ, ຜູ້ກ່ຽວຕ້ອງໄດ້ເປີດເຜີຍສະພາບການໃດໜຶ່ງທີ່ສາມາດເກີດຂຶ້ນ ຊຶ່ງມີຄວາມສົງໃສທີ່ສາມາດຢັ້ງຢືນໄດ້ຕໍ່ການບໍ່ເຂົ້າຂ້າງອອກຂາ ຫຼື ຄວາມເປັນເອກະລາດຂອງຜູ້ກ່ຽວ. ນັບແຕ່ມື້ທີ່ມີການແຕ່ງຕັ້ງ ແລະ ຕະຫຼອດໄລຍະເວລາໃນການດຳເນີນຄະດີ ເພື່ອຕັດສິນຂໍ້ຂັດແຍ່ງ ແລະ ໂດຍມີຄວາມຊັກຊ້າ, ກຳມະການຕັດສິນດັ່ງກ່າວ ຕ້ອງໄດ້ເປີດເຜີຍສະພາບການດັ່ງກ່າວ ໃຫ້ຄູ່ສັນຍາຝ່າຍອື່ນທັງໝົດຊາບ ແລະ ກຳມະການຕັດສິນທີ່ຖືກແຕ່ງຕັ້ງໂດຍຝ່າຍອື່ນ, ຍົກເວັ້ນພວກເຂົາເຈົ້າໄດ້ຮັບຂໍ້ມູນແລ້ວຈາກຜູ້ກ່ຽວຕໍ່ສະພາບການດັ່ງກ່າວນັ້ນ[15].

---

[12] ລະບຽບການຕັດສິນຂໍ້ຂັດແຍ່ງດ້ວຍຄະນະກຳມະການຂອງ **UNCITRAL** ມາດຕາ 7 .

[13] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບປີ 2018 ມາດຕາ 35 ວັກ 1

[14] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບປີ 2018 ມາດຕາ 35

[15] ລະບຽບການຕັດສິນຂໍ້ຂັດແຍ່ງດ້ວຍຄະນະກຳມະການຂອງ UNCITRAL ສະບັບດັດແກ້ 2010 ມາດຕາ 11

**2.5 ຫຼັກການຄວາມສະເໝີພາບຂອງຄູ່ກໍລະນີ**

ຄວາມສະເໝີພາບ ແມ່ນຄວາມເທົ່າທຽມກັນທາງດ້ານສິດທິ ໃນການປະພຶດຂອງຄົນ. ການໃຫ້ຄວາມສະເໝີພາບນີ້ ສະແດງອອກ ໃຫ້ເຫັນເຖິງການອະນຸຍາດໃຫ້ເຮັດໃນສິ່ງທີ່ຄົນອື່ນສາມາດເຮັດໄດ້. ໝາຍຄວາມວ່າ ຄູ່ກໍລະນີ ລ້ວນແຕ່ມີຄວາມສະເໝີພາບຕໍ່ໜ້າກົດໝາຍ ໂດຍບໍ່ຈຳແນກເພດ, ອາຍຸ, ອາຊີບ, ຖານະທາງດ້ານເສດຖະກິດ, ສັງຄົມ, ລະດັບການສຶກສາ, ຄວາມເຊື່ອຖື, ສາສະໜາ ແລະ ຊົນເຜົ່າ[16]. ກົດໝາຍໄດ້ລະບຸ ຫຼັກການນີ້ຢ່າງຊັດເຈນ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຄູ່ກໍລະນີ.ຍ້ອນວ່າ ໃນວົງການທຸລະກິດ, ການຮ່ວມມືທາງດ້ານການຜະລິດ-ທຸລະກິດ ແມ່ນມີການເຂົ້າຮ່ວມຂອງຫຼາຍລະດັບຄົນ, ຫຼາຍຊັ້ນຄົນ , ຫຼາຍຊາດຄົນ ໂດຍບໍ່ມີການຈຳແນກຄົນລາວ, ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດຊຶ່ງກົດໝາຍໃຫ້ການຄຸ້ມກັນທາງດ້ານສິດທິ ໂດຍກົງ[17].

ດັ່ງນັ້ນ, ຫຼັກການຄວາມສະເໝີພາບ ທີ່ນຳໃຊ້ເຂົ້າໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈຶ່ງຖືເປັນຫັກສະໜຶ່ງ ທີ່ເປັນປັດໃຈທີ່ສຳຄັນປະກອບສ່ວນເຂົ້າໃນການໃຫ້ໂອກາດໃຫ້ແກ່ຄູ່ກໍລະນີສາມາດສະເໜີຂໍ້ມູນຫຼັກຖານຕ່າງໆ ລວມທັງການສະແດງຄວາມຄິດເຫັນ ທີ່ເປັນຈຸດຢືນກໍຄືຈຸດປະສົງ ທີ່ຕົນເອງປາດຖະໜາ ເພື່ອໃຫ້ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ສາມາດເກັບກຳທຸກຂໍ້ມູນ ຂອງແຕ່ລະຝ່າຍ ເພື່ອເປັນບ່ອນອີງໃນການຕັດສິນຂໍ້ຂັດແຍ່ງໃຫ້ດຳເນີນໄປຕາມເຈດຈຳນົງ ຂອງແຕ່ລະຝ່າຍ ບົນພື້ນຖານກົດໝາຍບໍ່ເກືອດຫ້າມ.

**2.6 ຫຼັກການຖືເອົາສຽງສ່ວນຫຼາຍໃນການຕັດສິນ**

ການຖືເອົາສຽງສ່ວນຫຼາຍ ໃນເວລາຕັດສິນ ຖືເປັນການຈັດຕັ້ງປະຕິບັດຫຼັກການປະຊາທິປະໄຕ ໃນການຕັດສິນບັນຫາ. ໃນສາຍພົວພັນສັງຄົມ ໂດຍທົ່ວໄປແລ້ວ ການຖືເອົາສຽງສ່ວນຫຼາຍເປັນຫຼັກນັ້ນ ແມ່ນຫັກສະໜຶ່ງ ໃນການສ້າງຄວາມເຊື່ອໝັ້ນ ໃຫ້ຄູ່ກໍລະນີ ໃຫ້ປະລະແນວຄິດໃນຕົວຂອງຕົນເອງ ໄປສູ່ແນວຄິດຂອງຄົນສ່ວນຫຼາຍ, ຂອງກຸ່ມຄົນ ແລະ ແນວຄິດທີ່ກ້າວໜ້າ.

ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານການຕັດສິນ ໃນການລົງຄຳຕັດສິນຂອງຄະນະກຳມະການຕັດສິນ ໃຫ້ຖືເອົາສຽງສ່ວນຫຼາຍ[18] ກໍຍ້ອນວ່າ ເພື່ອຫຼີກລ້ຽງໄດ້ການຕັດສິນທີ່ບໍ່ນອນໃນຂອບເຂດຂອງຄຳຮ້ອງຂໍ ແລະ ທັງເປັນຫຼີກລ້ຽງໄດ້ການຕັດສິນທີ່ບໍ່ເປັນທຳ, ບໍ່ໂປ່ງໃສ ແລະ ພາຍຫຼັງລົງຄຳຕັດສິນແລ້ວ ຄູ່ກໍລະນີມີຄວາມພໍໃຈ ແລະ ຈິງໃຈນຳໄປຈັດຕັ້ງຢ່າງບັງເກີດຜົນ , ຫຼຸດຜ່ອນໄດ້ການນຳເອົາຄຳຕັດສິນສະເໜີໄປຍັງສານປະຊາຊົນຢັ້ງຢືນເອົາ ແລະ ທັງເປັນຫຼຸດຜ່ອນການສົ່ງຄຳຕັດສິນໄປຍັງອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ທັງໝົດນັ້ນແມ່ນປະກອບໂດຍກົງເຂົ້າສູ່ການສ້າງຄວາມສະຫງົບສຸກ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມອີກດ້ວຍ.

---

16 ປະມວນກົດໝາຍແພ່ງ ສະບັບເລກທີ 55/ສພຊ ລົງວັນທີ 6 ທັນວາ 2018 ມາດຕາ 10

17 ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບປີ 2018 ມາດຕາ 11

18 ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບປີ 2018 ມາດຕາ 43

ຍ້ອນເຫດ ແລະ ຜົນຄືທີ່ກ່າວມານັ້ນ ໃນເວລາ ມີກຳມະການຕັດສິນຫຼາຍກວ່າເຄິ່ງໜຶ່ງ, ຄຳຕັດສິນໜຶ່ງຂອງຄະນະກຳມະການຕັດສິນຂໍ້ຂັດແຍ່ງ ຕ້ອງເຮັດຂຶ້ນບົນພື້ນຖານການຕົກລົງເປັນສຽງສ່ວນຫຼາຍຂອງຄະນະກຳມະການຕັດສິນ ຈຶ່ງຖືວ່າເປັນຄຳຕັດສິນທີ່ມີຄວາມເປັນທຳ ແລະ ໂປ່ງໃສ[19] .

## 3. ເງື່ອນໄຂ ແລະ ຂອບເຂດຂອງການຕັດສິນ

### 3.1 ການຕັດສິນຕ້ອງບົນຫຼັກການຄວາມສະໝັກໃຈ

ການດຳເນີນການພິຈາລະນາຕັດສິນຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈະມີຂຶ້ນໄດ້ກໍຕໍ່ເມື່ອຄູ່ກໍລະນີມີຄວາມສະໝັກໃຈນຳເອົາຂໍ້ຂັດແຍ່ງນັ້ນ ມາສູ່ອົງກອນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຊ່ວຍພິຈາລະນາແກ້ໄຂ, ມີຄວາມຈິງໃຈການຄັດເລືອກເອົາຜູ້ຕັດສິນ ຫຼື ກຳມະການຕັດສິນດ້ວຍຕົນເອງ ຫຼື ມີຄວາມຍິນດີຮັບເອົາການການຄັດເລືອກຜູ້ຕັດສິນໂດຍອົງກອນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ໃນກໍລະນີຄູ່ກໍລະນີບໍ່ສາມາດເລືອກໄດ້) ນັ້ນ ຢ່າງຈິງໃຈ, ມີຄວາມຍິນສະໜອງຂໍ້ມູນ ຫຼັກຖານ ທີ່ກ່ຽວຂ້ອງກັບຂໍ້ຂັດແຍ່ງ, ສະແດງຈຸດຢືນ ຫຼື ວັດຖຸປະສົງ ຂອງຕົນເອງໃຫ້ແກ່ຜູ້ຕັດສິນ ຫຼື ກຳມະການຕັດສິນ ເປັນບ່ອນອີງໃຫ້ການ ລົງຄຳຕັດສິນໃຫ້ດຳເນີນໄປຕາມເຈດຈຳນົງຂອງແຕ່ລະຝ່າຍ, ຖືຕ້ອງກັບຈຸດພິເສດຂອງຂໍ່ຂັດແຍ່ງ, ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ສາມດນຳໄປຈັດຕັ້ງປະຕິບັດໂດຍທັນທີ ຫຼື ໃນໄລຍະເວລາໃດໜຶ່ງທີ່ແນ່ນອນ.

ດັ່ງນັ້ນ ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈຶ່ງໄດ້ກຳນົດວ່າ: ຄູ່ກໍລະນີ ມີສິດນຳເອົາຂໍ້ຂັດແຍ່ງທາງດ້ານທຸລະກິດສະເໜີຕໍ່ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອແກ້ໄຂໂດຍບໍ່ມີການບັງຄັບ, ນາບຂູ່ຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ.

### 3.2 ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ແມ່ນການຄັດເລືອກຂອງຄູ່ກໍລະນີ

ການຄັດເລືອກກຳມະການຕັດສິນເປັນໜ້າທີຂອງຄູ່ກໍລະນີ ເປັນຜູ້ເລືອກ ຍ້ອນຕາມຫຼັກມູນຂອງການແກ້ໄຂຂໍ້ຂັດແຍ່ງລະບົບນອກສານ ຫຼື ລະບົບມີທາງເລືອກນີ້ ແມ່ນມີເປົ້າໝາຍແກ້ໄຂບັນຫາທີຂັດແຍ່ງກັນໃຫ້ຢູ່ໃນຂອບເຂດຂອງການຮ້ອງຂໍ. ສະນັ້ນ, ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຄູ່ກໍລະນີ ຈຶ່ງອະນຸຍາດໃຫ້ຄູ່ກໍລະນີຈຶ່ງຄັດເລືອກ ຜູ້ຕັດສິນ ຊຶ່ງຕົນເອງມີຄວາມເຊື່ອໝັ້ນວ່າ ແມ່ນຜູ້ຕັດສິນທີ່ຕົນເອງມີຄວາມເຊື່ອໝັ້ນ, ໄວ້ເນື້ອເຊື່ອໃຈທີ່ສຸດມາເປັນຕົວແທນໃນການປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນ ເຫຼົ່ານີ້ເປັນຕົ້ນ.

ໃນກໍລະນີທີຄູ່ກໍລະນີບໍ່ສາມາດຄັດເລືອກຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນໄດ້ ແມ່ນ ອົງກອນ ທີ່ຮັບຜິດຊອບປກ້ໄຂຂໍ້ຂັດແຍ່ງ ຈຶ່ງມີສິດຄັດເລືອກຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນໃຫ້ແກ່ຄູ່ກໍລະນີ ແຕ່ເພື່ອຮັບປະກັນສິດຜົນປະໂຫຍດຂອງຄູ່ກໍລະນີ ດັ່ງນັ້ນ ກົດໝາຍອະນຸຍາດໃຫ້ຄູ່ກໍລະນີມີສິດຄ້ານຕົວຜູ້ຕັດສິນຜູ້ໃດຜູ້ໜຶ່ງ ຫຼື ຄະນະກຳມະການຕັດສິນນັ້ນໄດ້.

### 3.3 ການຕັດສິນຢູ່ໃນຂອບເຂດການຮ້ອງຟ້ອງ

---

[19] ລະບຽບການຕັດສິນຂໍ້ຂັດແຍ່ງດ້ວຍຄະນະກຳມະການຂອງ UNCITRAL ສະບັບດັດແກ້ 2010 ມາດຕາ 33 ວັກ 1

ການລົງຄຳຕັດສິນ ຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງຢູ່ໃນຂອບເຂດຂອງການຮ້ອງຂໍຂອງຄູ່ກໍລະນີ ນີ້ແມ່ນຫຼັກ ການຕາຍຕົວຂອງລະບົບການແກ້ໄຂຂໍ້ຂັດແຍ່ງທີ່ດຳເນີນຢູ່ນອກສານ. ຍ້ອນວ່າ ເປົ້າໝາຍຂອງການພິຈາລະນາຕັດສິນ ຕ້ອງໃຫ້ຖືກຕ້ອງກັບເນື້ອໃນຈິດໃຈຂອງຝ່າຍທີ່ຮ້ອງຂໍ ແລະ ຍອມຮັບໄດ້ຈາກຄູ່ກໍລະນີອີກຝ່າຍໜຶ່ງ. ການລົງຄຳຕັດສິນທີ່ນອນໃນຂອບຂອງຄຳຮ້ອງຂໍ ແລະ ຖືກຕ້ອງຕາມກົດໝາຍ ເປັນຄຳຕັດສິນທີ່ມີຜົນສັກສິດ ແລະ ໄດ້ຮັບການຈັດຕັ້ງປະຕິບັດໄດ້ງ່າຍ. ດັ່ງນັ້ນ, ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບ 2018 ຈຶ່ງໄດ້ກຳນົດວ່າ : ຄຳຕັດສິນຂອງຄະນະກຳມະການຕັດສິນ ຕ້ອງຢູ່ໃນຂອບເຂດຂອງຄູ່ກໍລະນີ[20]

❖ **ກໍລະນີຕັດສິນໂດຍຜູ້ຕັດສິນ 1 ທ່ານ**

1. ຜູ້ຕັດສິນ
2. ຜູ້ບັນທຶກ
3. ຜູ້ຮ້ອງຂໍ
4. ຜູ້ຖືກຮ້ອງຂໍ
5. ບຸກຄົນທີ່ສາມ (ຖ້າມີ)
6. ຜູ້ແປພາສາ (ຖ້າມີ)
7. ທະນາຍຄວາມ (ຖ້າມີ)




[20] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດານເສກຖະກິດ ສະບັບ 2018 ມາດຕາ 43 ວັກ 1

❖ **ກໍລະນີຕັດສິນໂດຍຄະນະຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ 3 ທ່ານ**

1. ປະທານຄະນະຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ
2. ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນທີ່ຜູ້ຮ້ອງຂໍເລືອກ
3. ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນທີ່ຜູ້ຖືກຮ້ອງຂໍເລືອກ
4. ຜູ້ບັນທຶກ
5. ຜູ້ຮ້ອງຂໍ
6. ຜູ້ຖືກຮ້ອງຂໍ
7. ບຸກຄົນທີ່ສາມ (ຖ້າມີ)
8. ຜູ້ແປພາສາ (ຖ້າມີ)
9. ທະນາຍຄວາມ (ຖ້າມີ)




**References:**

1. ລັດຖະທຳມະນູນ ສະບັບ 2015.
2. ປະມວນກົດໝາຍແພ່ງ ສະບັບເລກທີ 55/ສພຊ ລົງວັນທີ 6 ທັນວາ 2018.
3. ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງ ສປປ ລາວ, ສະບັບເລກທີ 52/ສພຊ, ລົງວັນທີ 22/6/2018.
4. ປະມວນເອກະສານຝຶກອົບຮົມທັກສະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດດ້ວຍການໄກ່ເກ່ຍ, ການຕັດສິນໂດຍກຳມະການ, ປີ 2020.
5. ປື້ມຄູ່ມືການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ປີ 2017.
6. ລະບຽບການຕັດສິນຂໍ້ຂັດແຍ່ງດ້ວຍຄະນະກຳມະການຂອງ UNCITRAL ສະບັບດັດແກ້ 2010.